ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ຝຶກອົບຮົມການນຳໃຊ້ ເຄື່ອງຈັກຄັດໄຈ້ທະນາບັດ DLR 7000



ກົມເງິນຕາ ທະນາຄານແຫ່ງ ສປປ ລາວ ຮ່ວມກັບ ບໍລິສັດ ອິນໂຟເທັກ (Infotech) ໄດ້ຮ່ວມກັນຈັດຝຶກອົບຮົມການນຳໃຊ້, ການບຳລຸງຮັກສາ ແລະ ສ້ອມແປງຂັ້ນພື້ນຖານເຄື່ອງຄັດໄຈ້ທະນາບັດຄວາມໄວສູງ DLR 7000 ຂຶ້ນໃນວັນທີ 18-19 ກໍລະກົດ 2019 ໂດຍການໃຫ້ກຽດເປັນປະທານຂອງທ່ານ ບຸນວົງ ດວງດອກເກດ ຫົວໜ້າກົມເງິນຕາ ທະນາຄານແຫ່ງ ສປປ ລາວ ແລະ ທ່ານ ວາລາລີ ວາວ ຊ່ຽວຊານຈາກປະເທດ ຟີລິປິນ ພ້ອມດ້ວຍພະນັກງານກົມເງິນຕາເຂົ້າຮ່ວມ.

ທ່ານ ບຸນວົງດວງ ດອກເກດ ໄດ້ໃຫ້ຮູ້ວ່າ ການຈັດຝຶກອົບຮົມກ່ຽວກັບຫລັກການລວມ, ວິທີການ, ເຕັກນິກທີ່ດີ ແລະ ປັດໄຈພື້ນຖານການນຳໃຊ້ເຄື່ອງຈັກຄັດໄຈ້ທະນາບັດ ກໍເພື່ອຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານກົມເງິນຕາຜູ້ທີ່ເຮັດວຽກກ່ຽວກັບຈັກຄັດໄຈ້ DLR 7000 ໃຫ້ມີຄວາມຮູ້, ຄວາມເຂົ້າໃຈ ແລະ ມີຄວາມຊຳນານງານດ້ານການນຳໃຊ້ ແລະ ບຳລຸງຮັກສາພ້ອມທັງໃຫ້ຮູ້ເຕັກນິກການສ້ອມແປງເຄື່ອງຈັກຂັ້ນພື້ນຖານ ແລະ ຍັງເປັນການປະຕິບັດຕາມສັນຍາວ່າດ້ວຍການບໍລິການບຳລຸງຮັກສາສ້ອມແປງເຄື່ອງຈັກຄັດໄຈ້ທະນະບັດ DLR 7000.



ຜ່ານການຝຶກອົບຮົມເປັນເວລາ 2 ວັນເຕັມເຫັນໄດ້ວ່າຜູ້ເຂົ້າຮ່ວມທັງໝົດມີຄວາມເອົາໃຈໃສ່ຕິດຕາມຮັບຟັງການບັນຍາຍ ແລະ ສອບຖາມບັນຫາຕ່າງໆທີ່ຍັງບໍ່ເຂົ້າໃຈເພື່ອໃຫ້ສາມາດກຳໄດ້ລະບົບການທຳງານຂອງເຄື່ອງຈັກ, ການບຳລຸງຮັກສາ ແລະ ການສ້ອມແປງໃຫ້ເຄື່ອງຄັດໄຈ້ມີຄວາມຄົງທົນ ແລະ ມີອາຍຸການໃຊ້ຍາວນານ ເຊິ່ງສະແດງອອກໃນເວລາສອບເສັງພາຍຫຼັງການຝຶກອົບຮົມແມ່ນສາມາດສອບເສັງຜ່ານທັງໝົດ 100%.

**#ຂ່າວ ແລະ ພາບ: ນ. ປາໄນ ພັນທະລາ**

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ